ບົດລາຍງານ
ຜົນການປະເມີນການຈັດຕັ້ງປະຕິບັດການຄຸ້ມຄອງບໍລິຫານຂອງ
ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ
ປະຈຳປີ 2024



ໂດຍ:

ຕະຫຼາດຫຼັກຊັບລາວ

ສາລະບານ

1. ຂໍ້ມູນກ່ຽວກັບບໍລິສັດ ມະຫາທຶນ ເຊົ່າສິນເຊື່ອ ມະຫາຊົນ 1

1.1. ຂໍ້ມູນທົ່ວໄປ 1

1.2. ຂໍ້ມູນທາງການເງິນ.....1

1.3. ຂໍ້ມູນສະພາບໍລິຫານ 1

1.4. ຂໍ້ມູນຄະນະກຳມະການຂອງສະພາບໍລິຫານ 2

1.5. ຂໍ້ມູນຄະນະອຳນວຍການ 3

1.6. ຂໍ້ມູນຜູ້ຮັບຜິດຊອບວຽກງານ CG.....3

2. ພາບລວມຄະແນນຜົນການປະເມີນການຈັດຕັ້ງການຄຸ້ມຄອງບໍລິຫານ 3

2.1. ຜົນການປະເມີນຄະແນນຕົວຈິງ.....3

2.2. ຜົນການປະເມີນແຍກຕາມໝວດການໃຫ້ຄະແນນ 3

3. ຂໍ້ປະຕິບັດສອດຄ່ອງ ແລະ ຂໍ້ຄົງຄ້າງ 4

3.1. ພາກທີ 1 ສິດຂອງຜູ້ຖືຮຸ້ນ ແລະ ການປະຕິບັດຕໍ່ຜູ້ຖືຮຸ້ນຢ່າງເທົ່າທຽມ 4

3.2. ພາກທີ 2 ການຄຸ້ມຄອງສາຍພົວພັນກັບຜູ້ມີສ່ວນຮ່ວມໃນຕະຫຼາດ 5

3.3. ພາກທີ 3 ການເປີດເຜີຍຂໍ້ມູນ ແລະ ຄວາມໂປ່ງໃສ 6

3.4. ພາກທີ 4 ພາລະບົດບາດ ແລະ ຄວາມຮັບຜິດຊອບຂອງສະພາບໍລິຫານ 7

4. ສິ່ງທີ່ຕ້ອງໄດ້ປັບປຸງ 9

4.1. ສິ່ງທີ່ຄວນກຳນົດໃນລະບຽບພາຍໃນ ຫຼື ລະບຽບການສະເພາະຂອງບໍລິສັດ.....9

4.2. ສິ່ງທີ່ຄວນນຳໄປຈັດຕັ້ງປະຕິບັດໃນຕໍ່ໜ້າ 9

1. ຂໍ້ມູນກ່ຽວກັບບໍລິສັດ ມະຫາທຶນ ເຊົ່າສິນເຊື່ອ ມະຫາຊົນ

1.1. ຂໍ້ມູນທົ່ວໄປ

ຫົວຂໍ້	ລາຍລະອຽດ
ຊື່ບໍລິສັດ:	ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ (ມຫທຊ)
ທີ່ຕັ້ງສຳນັກງານ:	ເຮືອນເລກທີ 628, ບ້ານ ໂພນພະເນົາ (ຫຼັກ5), ຖະໜົນໄກສອນພົມວິຫານ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ
ເບີໂທລະສັບ:	(856) 21 418065
ປະເພດທຸລະກິດ:	ບໍລິການ ເຊົ່າສິນເຊື່ອ
ວັນ.ເດືອນ.ປີ ຈົດທະບຽນໃນ ຕລຊລ:	18 ກັນຍາ 2018
ເວັບໄຊ:	www.mahathuen.com
ຈຳນວນພະນັກງານ:	112 ຄົນ
ຈຳນວນຮຸ້ນຈົດທະບຽນ:	400,000,000 ຮຸ້ນ
ລາຄາຕະຫຼາດ (20/12/2023):	440 ກີບ/ຮຸ້ນ
ມູນຄ່າຕະຫຼາດ (20/12/2023):	176,000,000,000 ກີບ

1.2. ຂໍ້ມູນທາງການເງິນ

ຕົວເລກຂໍ້ມູນການເງິນ (31 ທັນວາ 2023)	
ຊັບສິນ: 997,591 ລ້ານກີບ	ລາຍຮັບ: 43,642 ລ້ານກີບ
ໜີ້ສິນ: 917,355 ລ້ານກີບ	ລາຍຈ່າຍ: 33,568 ລ້ານກີບ
ທຶນ: 80,235 ລ້ານກີບ	ກຳໄລສຸດທິ: 9,316 ລ້ານກີບ

1.3. ຂໍ້ມູນສະພາບໍລິຫານ

ສະພາບໍລິຫານ ຂອງ ບໍລິສັດ ມຫທຊ ປະກອບມີສະມາຊິກທັງໝົດ 9 ທ່ານ ຊຶ່ງມີລາຍຊື່ ດັ່ງນີ້:

ລ.ດ	ຊື່ ແລະ ນາມສະກຸນ	ຕຳແໜ່ງ
1	ທ່ານ ທິຣະ ຊຸຕິວະລາພອນ	ປະທານສະພາບໍລິຫານ
2	ທ່ານ ວິຊຽນ ລັກນາທິນ	ຮອງປະທານສະພາບໍລິຫານ
3	ທ່ານ ມານິບ ຕຣີລິດວິໄລ	ສະມາຊິກ
4	ທ່ານ ພົງສັກ ຈັນໂອວາດ	ສະມາຊິກ
5	ທ່ານ ໄວຮຸ່ງ ມີນາກຸນ	ສະມາຊິກ
6	ທ່ານ ໂກວິດ ເກີດວິລັຍ	ສະມາຊິກ
7	ທ່ານ ວິນຍູ ຈິລະປະພາການ	ສະມາຊິກອິດສະຫຼະ
8	ທ່ານ ນາງ ສິລິລັດ ພົງພັກດີ	ສະມາຊິກອິດສະຫຼະ
9	ທ່ານ ທະນະວັດ ສິດທິພົງທະນະກຸນ	ສະມາຊິກອິດສະຫຼະ

1.4. ຂໍ້ມູນຄະນະກຳມະການຂອງສະພາບໍລິຫານ

ຄະນະກຳມະການຂອງສະພາບໍລິຫານ ບໍລິສັດ ມຫທຊ ປະກອບດ້ວຍ 5 ຄະນະກຳມະການ ເຊິ່ງແຕ່ລະຄະນະກຳມະການປະກອບດ້ວຍສະມາຊິກ ດັ່ງນີ້:

1) ຄະນະກຳມະການກວດສອບ

ລ.ດ	ຊື່ ແລະ ນາມສະກຸນ	ຕຳແໜ່ງ
1	ທ່ານ ວິນຍູ ຈິລະປະພາການ	ປະທານ (ສະມາຊິກອິດສະຫຼະ)
2	ທ່ານ ນາງ ສິລິລັດ ພົງພັກດີ	ສະມາຊິກອິດສະຫຼະ
3	ທ່ານ ທະນະວັດ ສິດທິພົງທະນະກຸນ	ສະມາຊິກອິດສະຫຼະ

2) ຄະນະກຳມະການຄຸ້ມຄອງຄວາມສ່ຽງ

ລ.ດ	ຊື່ ແລະ ນາມສະກຸນ	ຕຳແໜ່ງ
1	ທ່ານ ທິຣະ ຊຸຕິວະລາພອນ	ປະທານ
2	ທ່ານ ວິຊຽນ ລັກນາທິນ	ສະມາຊິກ
3	ທ່ານ ວິນຍູ ຈິລະປະພາການ	ສະມາຊິກອິດສະຫຼະ

3) ຄະນະກຳມະການການຄັດເລືອກ

ລ.ດ	ຊື່ ແລະ ນາມສະກຸນ	ຕຳແໜ່ງ
1	ທ່ານ ທິຣະ ຊຸຕິວະລາພອນ	ປະທານ
2	ທ່ານ ວິຊຽນ ລັກນາທິນ	ສະມາຊິກ
3	ທ່ານ ວິນຍູ ຈິລະປະພາການ	ສະມາຊິກອິດສະຫຼະ

4) ຄະນະກຳມະການການກຳນົດຄ່າຕອບແທນ

ລ.ດ	ຊື່ ແລະ ນາມສະກຸນ	ຕຳແໜ່ງ
1	ທ່ານ ທິຣະ ຊຸຕິວະລາພອນ	ປະທານ
2	ທ່ານ ວິຊຽນ ລັກນາທິນ	ສະມາຊິກ
3	ທ່ານ ທະນະວັດ ສິດທິພົງທະນະກຸນ	ສະມາຊິກອິດສະຫຼະ

5) ຄະນະກຳມະການກວດສອບລາຍການທີ່ກ່ຽວພັນ

ລ.ດ	ຊື່ ແລະ ນາມສະກຸນ	ຕຳແໜ່ງ
1	ທ່ານ ໂກວິດ ເກີດວິລັກ	ປະທານ
2	ທ່ານ ໄວຮຸ່ງ ມີນາກຸນ	ສະມາຊິກ
3	ທ່ານ ທະນະວັດ ສິດທິພົງທະນະກຸນ	ສະມາຊິກອິດສະຫຼະ

1.5. ຂໍ້ມູນຄະນະອຳນວຍການ

ລ.ດ	ຊື່ ແລະ ນາມສະກຸນ	ຕຳແໜ່ງ
1	ທ່ານ ມານົບ ຕຣີລິດວິໄລ	ຜູ້ອຳນວຍການໃຫຍ່
2	ທ່ານ ນາງ ສຸກພາພອນ ທອງໄພບູນ	ຮອງຜູ້ອຳນວຍການໃຫຍ່ຝ່າຍການເງິນ

1.6. ຂໍ້ມູນຜູ້ຮັບຜິດຊອບວຽກງານ CG

ລ.ດ	ຊື່ ແລະ ນາມສະກຸນ	ເບີໂທ	ອີເມລ
1	ທ່ານ ມານົບ ຕຣີລິດວິໄລ	020 5518 2244	manop.t@mahathuen.com
2	ທ່ານ ນາງ ຫວນຄຳ ແກ້ວມະນີ	020 9719 9936	ir@mahathuen.com

2. ພາບລວມຄະແນນຜົນການປະເມີນການຈັດຕັ້ງປະຕິບັດການຄຸ້ມຄອງບໍລິຫານ

2.1. ຜົນການປະເມີນຄະແນນຕົວຈິງ

ຜົນປະເມີນຄະແນນການຈັດຕັ້ງປະຕິບັດການຄຸ້ມຄອງບໍລິຫານ ຂອງ ບໍລິສັດ ມຫາທຸ ປະຈຳປີ 2024 ແມ່ນເຫັນວ່າ: ບໍລິສັດ ມຫາທຸ ໄດ້ຄະແນນທັງໝົດ 77.40 ຄະແນນ ຈັດເປັນ ປະເພດ 4 ດາວ ຊຶ່ງມີລາຍລະອຽດ ດັ່ງນີ້:

ພາກ	ຄະແນນທັງໝົດ	ຄະແນນຕົວຈິງ
ສິດຂອງຜູ້ຖືຮຸ້ນ ແລະ ການປະຕິບັດຕໍ່ຜູ້ຖືຮຸ້ນຢ່າງເທົ່າທຽມ	10	7.33
ການຄຸ້ມຄອງສາຍພົວພັນກັບຜູ້ທີ່ມີສ່ວນຮ່ວມໃນຕະຫຼາດ	10	6.82
ການເປີດເຜີຍຂໍ້ມູນ ແລະ ຄວາມໂປ່ງໃສ	40	37.84
ພາລະບົດບາດ ແລະ ຄວາມຮັບຜິດຊອບຂອງສະພາບໍລິຫານ	40	25.41
ລວມ	**100**	**77.40**


1. ສິດຂອງຜູ້ຖືຮຸ້ນ ແລະ ການປະຕິບັດຕໍ່ຜູ້ຖືຮຸ້ນຢ່າງເທົ່າທຽມ ປະຕິບັດໄດ້ 7.33 ຄະແນນ;
2. ການຄຸ້ມຄອງສາຍພົວພັນກັບຜູ້ທີ່ມີສ່ວນຮ່ວມໃນຕະຫຼາດ ປະຕິບັດໄດ້ 6.82 ຄະແນນ;
3. ການເປີດເຜີຍຂໍ້ມູນ ແລະ ຄວາມໂປ່ງໃສ ປະຕິບັດໄດ້ 37.84 ຄະແນນ;
4. ພາລະບົດບາດ ແລະ ຄວາມຮັບຜິດຊອບຂອງສະພາບໍລິຫານ ປະຕິບັດໄດ້ 25.41 ຄະແນນ.

2.2. ຜົນການປະເມີນແຍກຕາມໝວດການໃຫ້ຄະແນນ

ການໃຫ້ຄະແນນປະກອບມີ 3 ປະເພດ ເຊັ່ນ: FA (Fully Applied) - ປະຕິບັດໄດ້ທັງໝົດ = 1 ຄະແນນ, PA (Partial Applied) - ປະຕິບັດໄດ້ບາງສ່ວນ = 0.5 ຄະແນນ ແລະ NA (Not Applied) - ບໍ່ສາມາດປະຕິບັດໄດ້ = 0 ຄະແນນ, ບໍລິສັດ ມຫາທຸ ສາມາດປະຕິບັດໄດ້ດັ່ງນີ້:

MHHR	ສິດຂອງຜູ້ຖືຮຸ້ນ ແລະ ການປະຕິບັດຕໍ່ຜູ້ຖືຮຸ້ນຢ່າງເທົ່າທຽມ		ການຄຸ້ມຄອງສາຍພົວພັນກັບຜູ້ທີ່ມີສ່ວນຮ່ວມໃນຕະຫຼາດ		ການເປີດເຜີຍຂໍ້ມູນ ແລະ ຄວາມໂປ່ງໃສ		ພາລະບົດບາດ ແລະ ຄວາມຮັບຜິດຊອບຂອງສະພາບໍລິຫານ		ລວມ	
	ຄຳຖາມ	%	ຄຳຖາມ	%	ຄຳຖາມ	%	ຄຳຖາມ	%	ຄຳຖາມ	%
ປະຕິບັດໄດ້ທັງໝົດ	7.0	47%	4.0	36%	34.0	92%	17.0	46%	62.0	62%
ປະຕິບັດໄດ້ບາງສ່ວນ	8.0	53%	7.0	64%	2.0	5%	13.0	35%	30.0	30%
ບໍ່ສາມາດປະຕິບັດໄດ້	0.0	0%	0.0	0%	1.0	3%	7.0	19%	8.0	8%
ລວມ	**15.0**	**100%**	**11.0**	**100%**	**37.0**	**100%**	**37.0**	**100%**	**100.0**	**100%**

ຈາກຂໍ້ມູນຂ້າງເທິງນີ້ ແມ່ນເຫັນໄດ້ວ່າ ບໍລິສັດ ມຫທຊ ສາມາດຈັດຕັ້ງປະຕິບັດການຄຸ້ມຄອງບໍລິຫານໄດ້ທັງໝົດ 62%, ຮອງລົງມາແມ່ນສາມາດປະຕິບັດໄດ້ບາງສ່ວນ 30% ແລະ ບໍ່ສາມາດປະຕິບັດໄດ້ 8% ຂອງ ຄຳຖາມທັງໝົດ. ຜົນການປະເມີນຂ້າງເທິງ ສາມາດສະທ້ອນຜ່ານເສັ້ນສະແດງ ດັ່ງນີ້:



3. ຂໍ້ປະຕິບັດສອດຄ່ອງ ແລະ ຂໍ້ຄົງຄ້າງ

3.1. ພາກທີ 1 ສິດຂອງຜູ້ຖືຮຸ້ນ ແລະ ການປະຕິບັດຕໍ່ຜູ້ຖືຮຸ້ນຢ່າງເທົ່າທຽມ

ບໍລິສັດ ມຫທຊ ສາມາດປະຕິບັດໄດ້ທັງໝົດ (FA) 47%, ຮອງລົງມາແມ່ນປະຕິບັດໄດ້ບາງສ່ວນ (PA) 53% ແລະ ບໍ່ສາມາດປະຕິບັດໄດ້ແມ່ນ (NA) 0% ຂອງຄຳຖາມທັງໝົດໃນພາກນີ້ ຊຶ່ງມີລາຍລະອຽດ ດັ່ງນີ້:

ຂໍ້ປະຕິບັດສອດຄ່ອງ	ຂໍ້ຄົງຄ້າງ
- ການຈັດກອງປະຊຸມຜູ້ຖືຮຸ້ນ: ບໍລິສັດ ມຫທຊ ໄດ້ສົ່ງໜັງສືແຈ້ງເຊີນຜູ້ຖືຮຸ້ນທີ່ຄັດຕິດເອກະສານສຳຄັນກ່ອນກອງປະຊຸມຜູ້ຖືຮຸ້ນ ຢ່າງໜ້ອຍ 21 ວັນ ກ່ອນມື້ເປີດກອງປະຊຸມຜູ້ຖືຮຸ້ນ ພ້ອມທັງແຈ້ງຂັ້ນຕອນ ແລະ ວິທີ	- ບໍລິສັດ ມຫທຊ ຍັງບໍ່ຮັບຮອງນະໂຍບາຍສິດຂອງຜູ້ຖືຮຸ້ນທີ່ຖືຮຸ້ນ ຫຼື ຖືລວມກັນ 5% ຂຶ້ນໄປຂອງຈຳນວນທັງໝົດຂອງບໍລິສັດ ມີສິດໃນການເພີ່ມວາລະກອງປະຊຸມຜູ້ຖືຮຸ້ນ ແລະ ຜູ້ຖືຮຸ້ນ ທີ່ຖືຮຸ້ນ ຫຼື ຖືລວມກັນໜ້ອຍກວ່າ 5%

ການລົງຄະແນນສຽງ ລວມເຖິງໃຫ້ສິດແກ່ຜູ້ຖືຮຸ້ນໃນການລົງຄະແນນສຽງ 1 ຮຸ້ນຕໍ່ 1 ສຽງໃນກອງປະຊຸມຜູ້ຖືຮຸ້ນ. - ການແຕ່ງຕັ້ງ ຫຼື ຍົກເລີກສັນຍາບໍລິສັດກວດສອບ ແລະ ຄ່າບໍລິການກວດສອບໄດ້ຮັບອະນຸມັດຈາກກອງປະຊຸມຜູ້ຖືຮຸ້ນ. - ຜູ້ຖືຮຸ້ນໄດ້ຮັບຂໍ້ມູນກ່ຽວກັບປະສົບການ ແລະ ປະຫວັດຫຍໍ້ຂອງເປົ້າໝາຍຜູ້ສະໝັກທີ່ຖືກສະເໜີລາຍຊື່ ເພື່ອປະກອບເປັນສະມາຊິກສະພາບໍລິຫານ ລວມທັງຂໍ້ມູນກ່ຽວກັບອາຍຸ, ວຸດທິການສຶກສາ, ປະສົບການ ແລະ ການດຳລົງຕຳແໜ່ງຂອງພວກເຂົາໃນບໍລິສັດຈົດທະບຽນ ກ່ອນກອງປະຊຸມຜູ້ຖືຮຸ້ນ. - ຜູ້ອຳນວຍການໃຫຍ່ ແລະ ຜູ້ກວດສອບພາຍນອກ ໄດ້ເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນ ເປັນປະຈຳເພື່ອຕອບຄຳຖາມ ແລະ ຊີ້ແຈງປະເດັນທີ່ກ່ຽວຂ້ອງ.	ຂອງຈຳນວນທັງໝົດຂອງບໍລິສັດ ມີສິດໃນການສະເໜີເພີ່ມວາລະກອງປະຊຸມຜູ້ຖືຮຸ້ນຕໍ່ບໍລິສັດ ເພື່ອພິຈາລະນາ. - ບໍລິສັດ ມຫທຊ ຍັງບໍ່ໄດ້ຮັບຮອງນະໂຍບາຍສິດຂອງຜູ້ຖືຮຸ້ນ ທີ່ຖືຮຸ້ນ ຫຼື ຖືລວມກັນ 10% ຂຶ້ນໄປຂອງຈຳນວນທັງໝົດຂອງບໍລິສັດ ມີສິດສະເໜີສະພາບໍລິຫານ ຫຼື ຜູ້ອຳນວຍການບໍລິສັດ ເພື່ອຂໍເປີດກອງປະຊຸມຜູ້ຖືຮຸ້ນ. - ບໍລິສັດ ມຫທຊ ຍັງບໍ່ໄດ້ກຳນົດເຫດການກ່ຽວກັບການລົງທຶນ, ການຊື້ ຂາຍ ຫຼື ໂອນຊັບສິນທີ່ມີມູນຄ່າແຕ່ 50% ຂຶ້ນໄປຂອງຊັບສິນທັງໝົດ ແລະ ການອອກຈຳໜ່າຍຮຸ້ນໃໝ່ ແລະ ເຫດການອື່ນໆທີ່ສຳຄັນ ຊຶ່ງຕ້ອງໄດ້ຮັບການຮັບຮອງຈາກກອງປະຊຸມຜູ້ຖືຮຸ້ນ ໄວ້ໃນກົດລະບຽບພາຍໃນຂອງບໍລິສັດ. - ບໍລິສັດ ມຫທຊ ຍັງບໍ່ໄດ້ກຳນົດກ່ຽວກັບນະໂຍບາຍປັນຜົນ ໂດຍສະເພາະຕິດພັນກັບວິທີການຈ່າຍເງິນປັນຜົນພາຍໃນ 30 ວັນ ພາຍຫຼັງມີມະຕິກອງປະຊຸມຜູ້ຖືຮຸ້ນໃນກົດລະບຽບພາຍໃນຂອງບໍລິສັດ.

3.2. ພາກທີ 2 ການຄຸ້ມຄອງສາຍພົວພັນກັບຜູ້ມີສ່ວນຮ່ວມໃນຕະຫຼາດ

ບໍລິສັດ ມຫທຊ ສາມາດປະຕິບັດໄດ້ທັງໝົດ (FA) 36% ຮອງລົງມາແມ່ນປະຕິບັດໄດ້ບາງສ່ວນ (PA) 64% ແລະ ບໍ່ສາມາດປະຕິບັດໄດ້ແມ່ນ (NA) 0% ຂອງຄຳຖາມທັງໝົດໃນພາກນີ້ ເຊິ່ງມີລາຍລະອຽດ ດັ່ງນີ້:

ຂໍ້ປະຕິບັດສອດຄ່ອງ	ຂໍ້ຄົງຄ້າງ
- ບໍລິສັດ ມຫທຊ ໄດ້ກຳນົດນະໂຍບາຍກ່ຽວກັບຄວາມປອດໄພ ແລະ ສະຫວັດດີການສັງຄົມ. - ບໍລິສັດ ມຫທຊ ໄດ້ລະບຸຊ່ອງທາງການຕິດຕໍ່ພົວພັນເພື່ອຮັບຄຳເຫັນ ຫຼື ຮ້ອງຮຽນ ຂອງຜູ້ມີສ່ວນຮ່ວມໃນຕະຫຼາດຂອງຕົນ ກ່ຽວກັບບັນຫາ, ຂໍ້ສົງໄສ ຫຼື ການລະເມີດສິດ/ສັນຍາຂອງພວກເຂົາ ໄວ້ໃນເວັບໄຊ ຫຼື ບິດສະໜຸບການເຄື່ອນໄຫວທຸລະກິດປະຈຳປີຂອງ ບໍລິສັດ. - ບໍລິສັດ ມຫທຊ ໄດ້ສ້າງກົນໄກ ສຳລັບການສະໜອງຂໍ້ມູນ, ຄຳເຫັນ ຫຼື ຮ້ອງຮຽນ ຂອງພະນັກງານ ຕໍ່ກັບພຶດຕິກຳທີ່ບໍ່ສອດຄ່ອງກັບຫຼັກຈັນຍາບັນ, ລະບຽບການ ຫຼື ກົດໝາຍ ຂອງສະມາຊິກສະພາບໍລິຫານ ຫຼື ຜູ້ບໍລິຫານລະດັບສູງຂອງບໍລິສັດ.	- ສະພາບໍລິຫານ ຍັງບໍ່ໄດ້ຮັບຮອງນະໂຍບາຍເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ມີສ່ວນຮ່ວມໃນຕະຫຼາດຂອງຕົນ. - ສະພາບໍລິຫານ ຍັງບໍ່ໄດ້ຮັບຮອງນະໂຍບາຍກ່ຽວກັບການຝຶກອົບຮົມ ແລະ ພັດທະນາບຸກຄະລາກອນ. - ສະພາບໍລິຫານ ຍັງບໍ່ໄດ້ຮັບຮອງນະໂຍບາຍການຕ້ານການສໍ້ໂກງ ແລະ ການຮັບ ຫຼື ໃຫ້ສິນບົນ ຢ່າງເຂັ້ມງວດ ໄວ້ໃນກົດລະບຽບກ່ຽວກັບຈັນຍາບັນຂອງບໍລິສັດ. - ສະພາບໍລິຫານ ຍັງບໍ່ໄດ້ຮັບຮອງນະໂຍບາຍກ່ຽວກັບການພົວພັນກັບຊຸມຊົນທ້ອງຖິ່ນທີ່ບໍລິສັດດຳເນີນງານຢູ່. - ສະພາບໍລິຫານ ຍັງບໍ່ໄດ້ຮັບຮອງນະໂຍບາຍສິ່ງແວດລ້ອມ ແລະ ການສົ່ງເສີມການພັດທະນາແບບຍືນຍົງ ຂອງບໍລິສັດ.

- ບໍລິສັດ ມຫທຊ ໄດ້ກຳນົດນະໂຍບາຍ ຫຼື ກົນໄກ ເພື່ອປົກປ້ອງພະນັກງານ ຫຼື ຜູ້ມີສ່ວນຮ່ວມໃນຕະຫຼາດຂອງຕົນ ທີ່ສະໜອງຂໍ້ມູນ, ຄຳເຫັນ ຫຼື ຄຳຮ້ອງຟ້ອງ ກ່ຽວກັບພຶດຕິກຳທີ່ບໍ່ສອດຄ່ອງກັບຫຼັກຈັນຍາບັນ, ລະບຽບການ ແລະ ກົດໝາຍທີ່ກ່ຽວຂ້ອງ.	- ສະພາບໍລິຫານ ຍັງບໍ່ໄດ້ຮັບຮອງນະໂຍບາຍກ່ຽວກັບການຄັດເລືອກຄູ່ຄ້າ, ຜູ້ສະໜອງ ແລະ ຜູ້ຮັບເໝົາ.

3.3. ພາກທີ 3 ການເປີດເຜີຍຂໍ້ມູນ ແລະ ຄວາມໂປ່ງໃສ

ບໍລິສັດ ມຫທຊ ສາມາດປະຕິບັດໄດ້ທັງໝົດ (FA) 92%, ຮອງລົງມາແມ່ນປະຕິບັດໄດ້ບາງສ່ວນ (PA) 5% ແລະ ບໍ່ສາມາດປະຕິບັດໄດ້ແມ່ນ (NA) 3% ຂອງຄຳຖາມທັງໝົດໃນພາກນີ້ ເຊິ່ງມີລາຍລະອຽດ ດັ່ງນີ້:

ຂໍ້ປະຕິບັດສອດຄ່ອງ	ຂໍ້ຄົງຄ້າງ
- ບໍລິສັດ ມຫທຊ ໄດ້ເປີດເຜີຍຂໍ້ມູນກ່ຽວກັບ ລັກສະນະ, ມູນຄ່າ ແລະ ລາຍຊື່ ບຸກຄົນ ແລະ ນິຕິບຸກຄົນ ທີ່ກ່ຽວພັນ ພ້ອມທັງ ສາຍພົວພັນຂອງຜູ້ກ່ຽວຕໍ່ລາຍການທີ່ກ່ຽວພັນ ໃນເອກະສານລາຍງານການເງິນຂອງບໍລິສັດ. - ບໍລິສັດ ມຫທຊ ໄດ້ເປີດເຜີຍກ່ຽວກັບ ວິໄສທັດ, ຈຸດປະສົງ, ເປົ້າໝາຍ ຫຼື ແຜນຍຸດທະສາດໃນການເຄື່ອນໄຫວວຽກງານ ຂອງບໍລິສັດ. - ບໍລິສັດ ມຫທຊ ໄດ້ເປີດເຜີຍຂໍ້ມູນລະອຽດກ່ຽວກັບ ປັດໄຈຄວາມສ່ຽງ,ຂໍ້ມູນທາງການເງິນ, ຂໍ້ມູນບໍ່ແມ່ນການເງິນ, ປະຫວັດການສຶກສາ ແລະ ການຝຶກອົບຮົມຂອງສະພາບໍລິຫານ, ຈຳນວນຄັ້ງໃນການຈັດກອງປະຊຸມສະພາບໍລິຫານ ແລະ ກອງປະຊຸມຄະນະກຳມະການຂອງສະພາບໍລິຫານແລະ ເຫດການສຳຄັນທີ່ເກີດຂຶ້ນ ໃນບົດລາຍງານການເຄື່ອນໄຫວທຸລະກິດປະຈຳປີຂອງບໍລິສັດ. - ບໍລິສັດ ມຫທຊ ໄດ້ເປີດເຜີຍຂໍ້ມູນກ່ຽວກັບ ລາຍຊື່ຜູ້ຖືຮຸ້ນ ທາງກົງ ແລະ ທາງອ້ອມ ທີ່ຖືຮຸ້ນແຕ່ 5% ຂຶ້ນໄປ. - ບໍລິສັດ ມຫທຊ ໄດ້ເປີດເຜີຍຂໍ້ມູນກ່ຽວກັບການຖືຮຸ້ນ ທາງກົງ ແລະ ທາງອ້ອມຂອງສະມາຊິກສະພາບໍລິຫານ ແລະ ຄະນະອຳນວຍການ. - ບໍລິສັດ ມຫທຊ ໄດ້ເປີດເຜີຍຂໍ້ມູນກ່ຽວກັບ ເອກະສານລາຍງານການເງິນປະຈຳປີ, ບົດລາຍງານການເຄື່ອນໄຫວທຸລະກິດປະຈຳປີ, ມະຕິກອງປະຊຸມຜູ້ຖືຮຸ້ນ ແລະ ບົດບັນທຶກກອງປະຊຸມຜູ້ຖືຮຸ້ນ ໃນເວັບໄຊ້ຂອງບໍລິສັດ ຢ່າງປົກກະຕິ.	- ບໍລິສັດ ມຫທຊ ບໍ່ໄດ້ເປີດເຜີຍນະໂຍບາຍກ່ຽວກັບລາຍການທີ່ກ່ຽວພັນ ເປັນຕົ້ນ ຂັ້ນຕອນການພິຈາລະນາ ແລະ ການອະນຸມັດ ລາຍການທີ່ກ່ຽວພັນ (RPTs), ຂໍ້ມູນລະອຽດກ່ຽວກັບ ກຸ່ມບໍລິສັດ ຫຼື ບໍລິສັດໃນກຸ່ມ ໃນບົດລາຍງານການເຄື່ອນໄຫວທຸລະກິດປະຈຳປີ. - ບໍລິສັດ ມຫທຊ ບໍ່ໄດ້ເປີດເຜີຍລະບຽບພາຍໃນກ່ຽວກັບການກຳນົດຄ່າຕອບແທນຂອງສະພາບໍລິຫານ, ຄະນະອຳນວຍການ ແລະ ພະນັກງານ ໃຫ້ມວນຊົນຊາບ ຜ່ານທາງເວັບໄຊ້ຂອງບໍລິສັດ. - ສະພາບໍລິຫານ ບໍ່ໄດ້ເປີດເຜີຍຂໍ້ມູນກ່ຽວກັບມາດຖານທີ່ນຳໃຊ້ໃນການຄັດເລືອກ, ຂັ້ນຕອນການຄັດເລືອກ ແລະ ແຕ່ງຕັ້ງສະພາບໍລິຫານຊຸດໃໝ່. - ບໍລິສັດ ມຫທຊ ບໍ່ໄດ້ເປີດຄ່າບໍລິການອື່ນໆຂອງບໍລິສັດ ກວດສອບພາຍນອກ ທີ່ບໍ່ແມ່ນການກວດສອບເອກະສານລາຍງານການເງິນ.

- ບໍລິສັດ ມຫທຊ ໄດ້ເປີດເຜີຍບົດລາຍງານການເຄື່ອນໄຫວທຸລະກິດປະຈຳປີ ແລະ ເອກະສານລາຍງານການເງິນທີ່ຜ່ານການກວດສອບຈາກຜູ້ກວດສອບພາຍນອກ ພາຍໃນ 120 ວັນ ນັບແຕ່ວັນສິ້ນສຸດປີການບັນຊີ. - ບໍລິສັດ ມຫທຊ ໄດ້ເປີດເຜີຍເອກະສານລາຍງານການເງິນປະຈຳໄຕມາດ 1 ແລະ ໄຕມາດ 3 ພາຍໃນ 45 ວັນ ນັບແຕ່ວັນສິ້ນສຸດໄຕມາດ 1 ແລະ ໄຕມາດ 3 ເປັນຕົ້ນໄປ. - ບໍລິສັດ ມຫທຊ ໄດ້ເປີດເຜີຍເອກະສານລາຍງານການເງິນປະຈຳ 6 ເດືອນຕົ້ນປີ ທີ່ຜ່ານການທົບທວນຈາກຜູ້ກວດສອບພາຍນອກ ພາຍໃນ 60 ວັນ ນັບແຕ່ວັນສິ້ນສຸດໄຕມາດ 2 ເປັນຕົ້ນໄປ. - ບໍລິສັດ ມຫທຊ ໄດ້ເປີດເຜີຍມະຕິກອງປະຊຸມຜູ້ຖືຮຸ້ນ ພາຍໃນກຳນົດເວລາ 24 ຊົ່ວໂມງ ນັບແຕ່ວັນສຳເລັດກອງປະຊຸມຜູ້ຖືຮຸ້ນເປັນຕົ້ນໄປ. - ບໍລິສັດ ມຫທຊ ໄດ້ເປີດເຜີຍຄ່າບໍລິການຂອງບໍລິສັດກວດສອບທີ່ໄດ້ຮັບຈາກການກວດສອບເອກະສານລາຍງານການເງິນໃນແຕ່ລະປີ. - ບໍລິສັດ ມຫທຊ ໄດ້ມີການແຕ່ງຕັ້ງຜູ້ຮັບຜິດຊອບໃນການລາຍງານ ແລະ ຜູ້ຮັບຜິດຊອບວຽກງານເປີດເຜີຍຂໍ້ມູນ ແລະ ໄດ້ຜ່ານການຝຶກອົບຮົມວຽກງານດັ່ງກ່າວ.	

3.4. ພາກທີ 4 ພາລະບົດບາດ ແລະ ຄວາມຮັບຜິດຊອບຂອງສະພາບໍລິຫານ

ບໍລິສັດ ມຫທຊ ສາມາດປະຕິບັດໄດ້ທັງໝົດ (FA) 46%, ປະຕິບັດໄດ້ບາງສ່ວນ (PA) 35% ແລະ ບໍ່ສາມາດປະຕິບັດໄດ້ (NA) 19% ຂອງຄຳຖາມໃນພາກນີ້ ຊຶ່ງມີລາຍລະອຽດ ດັ່ງນີ້:

ຂໍ້ປະຕິບັດສອດຄ່ອງ	ຂໍ້ຄົງຄ້າງ
- ການແຕ່ງຕັ້ງ ຫຼື ປົດຕຳແໜ່ງ ສະມາຊິກສະພາບໍລິຫານໄດ້ຮັບການຕົກລົງເຫັນດີຈາກກອງປະຊຸມຜູ້ຖືຮຸ້ນ. - ສະພາບໍລິຫານ ປະກອບມີສະມາຊິກທັງໝົດ 09 ທ່ານ ແລະ ໃນນີ້ສະມາຊິກອິດສະຫຼະມີ 03 ທ່ານ (ຫຼາຍກວ່າ 1/3 ຂອງສະມາຊິກສະພາບໍລິຫານທັງໝົດ). - ສະພາບໍລິຫານ ມີສະມາຊິກເພດຍິງ 1 ທ່ານ.	- ສະພາບໍລິຫານ ຍັງບໍ່ໄດ້ກຳນົດເງື່ອນໄຂ, ມາດຕະຖານ, ອາຍຸການດຳລົງຕຳແໜ່ງ ຫຼື ພົ້ນຕຳແໜ່ງການເປັນສະມາຊິກສະພາບໍລິຫານ ເຊັ່ນ ສະມາຊິກສະພາບໍລິຫານທີ່ບໍ່ມີສ່ວນຮ່ວມໃນການບໍລິຫານ, ສະມາຊິກອິດສະຫຼະ ແລະ ຕ້ອງມີສະມາຊິກເພດຍິງຢ່າງ 1 ທ່ານ, ສະມາຊິກອິດສະຫຼະ ມີອາຍຸການດຳລົງຕຳແໜ່ງລວມສູງສຸດບໍ່ເກີນ 8 ປີຕໍ່ເນື່ອງ ແລະ ສະມາຊິກອິດສະຫຼະ ດຳລົງຕຳແໜ່ງຄົບອາຍຸ ສາມາດ

- ສະພາບໍລິຫານໄດ້ມີການຈັດກອງປະຊຸມ 7 ຄັ້ງຕໍ່ປີ ແລະ ສະມາຊິກແຕ່ລະທ່ານໄດ້ເຂົ້າຮ່ວມກອງປະຊຸມສະພາ ບໍລິຫານຢ່າງໜ້ອຍ 3/4 ຂອງກອງປະຊຸມທັງໝົດ.
- ສະພາບໍລິຫານ ໄດ້ກຳນົດ ຈຸດປະສົງ, ວິໄສທັດ ແລະ ສື່ສານວັດທະນາທຳຂອງອົງກອນ ເພື່ອເຮັດໃຫ້ ພະນັກງານທັງໝົດພາຍໃນບໍລິສັດ ເຂົ້າໃຈກ່ຽວກັບທິດ ທາງແຜນຍຸດທະສາດຂອງບໍລິສັດ.
- ກົດລະບຽບຂອງບໍລິສັດ ໄດ້ກຳນົດຈະແຈ້ງ ກ່ຽວກັບ ສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບຂອງສະພາບໍລິຫານ.
- ຄະນະກຳມະການກວດສອບປະກອບມີ ສະມາຊິກທີ່ບໍ່ມີ ສ່ວນຮ່ວມໃນການບໍລິຫານ ແລະ ໃນນັ້ນ 1/2 ແມ່ນ ສະມາຊິກອິດສະຫຼະ ແລະ ມີຄວາມຮູ້ປະສົບການດ້ານ ບັນຊີ.
- ສະພາບໍລິຫານໄດ້ມີການແຕ່ງຕັ້ງ ຄະນະກຳມະການກວດ ສອບ, ຄະນະກຳມະການຄຸ້ມຄອງຄວາມສ່ຽງ, ຄະນະກຳມະ ການຄັດເລືອກ. ຄະນະກຳມະການກຳນົດຜົນຕອບແທນ ຢ່າງຄົບຖ້ວນ.
- ຄະນະກຳມະການໄດ້ມີການຈັດກອງປະຊຸມ ຕາມລະບຽບ ການທີ່ກ່ຽວຂ້ອງ ແລະ ເຂົ້າຮ່ວມກອງປະຊຸມເປັນປະຈຳ.

ດຳລົງຕຳແໜ່ງເປັນສະມາຊິກສະພາບໍລິຫານທີ່ບໍ່ແມ່ນ ສະມາຊິກອິດສະຫຼະໄດ້ໃນລະບຽບພາຍໃນຂອງສະພາ ບໍລິຫານ.

- ປະທານສະພາບໍລິຫານບໍ່ແມ່ນສະມາຊິກອິດສະຫຼະ ພ້ອມ ນັ້ນສະພາບໍລິຫານ ບໍ່ໄດ້ຄັດເລືອກ ແລະ ແຕ່ງຕັ້ງຫົວໜ້າ ສະມາຊິກອິດສະຫຼະ.
- ປະທານຄະນະກຳມະການຄຸ້ມຄອງຄວາມສ່ຽງ, ປະທານ ຄະນະກຳມະການຄັດເລືອກ, ປະທານຄະນະກຳມະການ ກຳນົດຄ່າຕອບແທນ ບໍ່ແມ່ນສະມາຊິກອິດສະຫຼະ.
- ສະມາຊິກສະພາບໍລິຫານແຕ່ລະຄົນ ບໍ່ໄດ້ຮັບເອກະສານທີ່ ຕິດພັນກັບກອງປະຊຸມສະພາບໍລິຫານ ຫຼື ຄະນະກຳມະການ ຂອງສະພາບໍລິຫານ ຢ່າງໜ້ອຍ 7 ວັນລັດຖະການ ກ່ອນ ການປະຊຸມ.
- ສະພາບໍລິຫານບໍ່ໄດ້ສ້າງ ແລະ ຮັບຮອງລະບຽບພາຍໃນ ກ່ຽວກັບຄະນະກຳມະການສະພາບໍລິຫານຕ່າງໆ ພ້ອມທັງ ເຜີຍແຜ່ລະບຽບດັ່ງກ່າວໃຫ້ມວນຊົນຮັບຊາບຜ່ານເວັບໄຊ ຂອງບໍລິສັດ.
- ສະພາບໍລິຫານ ບໍ່ໄດ້ສ້າງ ແລະ ເປີດເຜີຍແຜນສືບທອດ ພະນັກງານສຳລັບຕຳແໜ່ງສະມາຊິກສະພາບໍລິຫານ, ຄະນະ ອຳນວຍການ ແລະ ພະນັກງານທີ່ສຳຄັນຂອງບໍລິສັດ.
- ສະພາບໍລິຫານ ບໍ່ໄດ້ຮັບຮອງແຜນການຈັດກອງປະຊຸມ ສະພາບໍລິຫານທີ່ ກວມເອົາວັນເວລາຈັດຕັ້ງກອງປະຊຸມ ສະພາບໍລິຫານ ແລະ ວາລະ ຈະປຶກສາຫາລື.
- ສະພາບໍລິຫານ ບໍ່ໄດ້ກຳນົດອົງປະຊຸມຂອງກອງປະຊຸມ ສະພາບໍລິຫານ ຢ່າງໜ້ອຍ 2/3 ຂອງຈຳນວນສະມາຊິກທັງ ໝົດ ໄວ້ໃນລະບຽບພາຍໃນຂອງບໍລິສັດ.
- ຄະນະກຳມະການຄຸ້ມຄອງຄວາມສ່ຽງ ຍັງບໍ່ໄດ້ສ້າງ ແລະ ຄຸ້ມຄອງຂັ້ນຕອນ ແລະ ນະໂຍບາຍໃນການກຳນົດ ແລະ ບໍລິຫານຄວາມສ່ຽງ.
- ສະພາບໍລິຫານ ບໍ່ໄດ້ປະເມີນຜົນການເຄື່ອນໄຫວວຽກງານ ຂອງ ສະພາບໍລິຫານ, ສະມາຊິກສະພາບໍລິຫານ ແລະ ຄະນະ ກຳມະການຂອງສະພາບໍລິຫານ ປະຈຳປີ.
- ສະພາບໍລິຫານ ຍັງບໍ່ໄດ້ສ້າງ ແລະ ເປີດເຜີຍມາດຖານ, ເງື່ອນໄຂ ແລະ ຂັ້ນຕອນກ່ຽວກັບການປະເມີນຜົນ

	ການເຄື່ອນໄຫວວຽກງານຂອງ ປະທານສະພາບໍລິຫານ, ສະມາຊິກສະພາບໍລິຫານ ແລະ ຄະນະກຳມະການຂອງສະພາ ບໍລິຫານ ໃນບົດລາຍງານການເຄື່ອນໄຫວທຸລະກິດປະຈຳປີ.

4. ສິ່ງທີ່ຕ້ອງໄດ້ປັບປຸງ

4.1. ສິ່ງທີ່ຄວນກຳນົດໃນລະບຽບພາຍໃນ ຫຼື ລະບຽບການສະເພາະຂອງບໍລິສັດ

ເພື່ອປັບປຸງວຽກງານການຄຸ້ມຄອງບໍລິຫານໃຫ້ດີຂຶ້ນ ບໍລິສັດ ມຫທຊ ຄວນແກ້ໄຂບັນຫາທີ່ຍັງຄົງຄ້າງ ດັ່ງນີ້:

- ຄວນຮັບຮອງນະໂຍບາຍສິດຂອງຜູ້ຖືຮຸ້ນ ທີ່ຖືຮຸ້ນ ຫຼື ຖືລວມກັນ 5% ຂຶ້ນໄປຂອງຈຳນວນຫັ້ງໝົດຂອງບໍລິສັດ ມີສິດໃນການເພີ່ມວາລະກອງປະຊຸມຜູ້ຖືຮຸ້ນ ແລະ ຜູ້ຖືຮຸ້ນ ທີ່ຖືຮຸ້ນ ຫຼື ຖືລວມກັນໜ້ອຍກວ່າ 5% ຂອງຈຳນວນຫັ້ງໝົດຂອງບໍລິສັດ ຄວນໄດ້ຮັບສິດໃນການສະເໜີເພີ່ມວາລະກອງປະຊຸມຜູ້ຖືຮຸ້ນຕໍ່ບໍລິສັດ ເພື່ອພິຈາລະນາ ໄວ້ໃນກົດລະບຽບພາຍໃນຂອງບໍລິສັດ;
- ຄວນຮັບຮອງນິດນະໂຍບາຍສິດຂອງຜູ້ຖືຮຸ້ນ ທີ່ຖືຮຸ້ນ ຫຼື ຖືລວມກັນ 10% ຂຶ້ນໄປຂອງຈຳນວນຫັ້ງໝົດຂອງບໍລິສັດ ມີສິດສະເໜີສະພາບໍລິຫານ ຫຼື ຜູ້ອຳນວຍການບໍລິສັດ ເພື່ອຂໍເປີດກອງປະຊຸມຜູ້ຖືຮຸ້ນ ໄວ້ໃນກົດລະບຽບພາຍໃນ ຂອງບໍລິສັດ;
- ຄວນກຳນົດເຫດການຕ່າງໆ ທີ່ຕ້ອງຜ່ານການຮັບຮອງຈາກກອງປະຊຸມຜູ້ຖືຮຸ້ນ ເປັນຕົ້ນ ການອອກຈຳໜ່າຍຮຸ້ນໃໝ່, ການລົງທຶນ ຊື້ ຂາຍ, ໂອນ ຊັບສິນທີ່ມູນຄ່າກວມເອົາ 50% ຂຶ້ນໄປ ຂອງຊັບສິນທັ້ງໝົດຂອງບໍລິສັດ ໄວ້ໃນກົດລະບຽບພາຍໃນຂອງບໍລິສັດ;
- ສະພາບໍລິຫານ ຄວນກຳນົດເງື່ອນໄຂ, ມາດຕະຖານຂອງການເປັນສະມາຊິກສະພາບໍລິຫານ, ໂຄງປະກອບບຸກຄະກອນສະພາບໍລິຫານຕ້ອງປະກອບສະມາຊິກອິດສະຫຼະ, ສະມາຊິກສະພາບໍລິຫານທີ່ບໍ່ມີສ່ວນຮ່ວມໃນການບໍລິຫານ ແລະ ສະມາຊິກສະພາບໍລິຫານເພດຍິງ, ສິດ, ໜ້າທີ່, ຄວາມຮັບຜິດຊອບ, ອາຍຸການດຳລົງຕຳແໜ່ງ ຫຼື ຜົ້ນຕຳແໜ່ງ ການເປັນສະມາຊິກສະພາບໍລິຫານ, ຂັ້ນຕອນ ແລະ ແຜນວິທີການເຮັດວຽກ, ນະໂຍບາຍກຳນົດຄ່າຕອບແທນຂອງ ສະມາຊິກສະພາບໍລິຫານ ແລະ ອື່ນໆ ຕາມຫຼັກການຄຸ້ມຄອງບໍລິຫານ ທີ່ກຳນົດໄວ້ໃນຄຳແນະນຳວ່າດ້ວຍການຄຸ້ມຄອງບໍລິຫານສຳລັບບໍລິສັດຈົດທະບຽນ;
- ສະພາບໍລິຫານຄວນຮັບຮອງນະໂຍບາຍປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ທີ່ມີສ່ວນຮ່ວມໃນຕະຫຼາດ, ນະໂຍບາຍກ່ຽວກັບການຄັດເລືອກຄູ່ຄ້າ, ຜູ້ສະໜອງ ແລະ ຜູ້ຮັບເໝົາ;
- ສະພາບໍລິຫານຄວນຮັບຮອງນະໂຍບາຍໃນການຝຶກອົບຮົມ ແລະ ພັດທະນາບຸກຄະລາກອນ, ນະໂຍບາຍການຕ້ານ ການສໍ້ໂກງ ແລະ ການຮັບ ຫຼື ໃຫ້ສິນບົນ, ນະໂຍບາຍສິ່ງແວດລ້ອມ ແລະ ການສົ່ງເສີມການພັດທະນາແບບຍືນຍົງ, ນະໂຍບາຍກ່ຽວກັບການພົວພັນກັບຊຸມຊົນທ້ອງຖິ່ນທີ່ບໍລິສັດດຳເນີນງານຢູ່;
- ຄວນສ້າງລະບຽບສະເພາະຂອງຄະນະກຳມະການຕ່າງໆຂອງສະພາບໍລິຫານ ເປັນຕົ້ນສິດ, ໜ້າທີ່, ຄວາມຮັບຜິດຊອບ, ໂຄງປະກອບບຸກຄະລາກອນ, ມາດຕະຖານ ແລະ ເງື່ອນໄຂການເປັນສະມາຊິກຄະນະກຳມະການ, ກົນໄກ,ຂັ້ນຕອນ ແລະ ມາດຖານໃນການຄັດເລືອກ ຫຼື ກຳນົດຄ່າຕອບແທນ, ວິທີການເຮັດວຽກ ລວມໄປເຖິງນະໂຍບາຍກຳນົດຄ່າ ຕອບແທນຕ່າງໆ ຂອງຄະນະກຳມະການ ແລະ ອື່ນໆ ພ້ອມທັ້ງສະເໜີໃຫ້ສະພາບໍລິຫານຂອງບໍລິສັດ ພິຈາລະນາ ແລະ ຮັບຮອງເອົາ.

4.2. ສິ່ງທີ່ຄວນນຳໄປຈັດຕັ້ງປະຕິບັດໃນຕໍ່ໜ້າ

ເພື່ອປັບປຸງວຽກງານການຄຸ້ມຄອງບໍລິຫານໃຫ້ດີຂຶ້ນ ບໍລິສັດ ມຫທຊ ຄວນເພີ່ມຄວາມເອົາໃຈໃສ່ບັນຫາ ດັ່ງນີ້:

- ເອົາໃຈໃສ່ເປີດເຜີຍຂໍ້ມູນກ່ຽວກັບລາຍການທີ່ກ່ຽວພັນ, ກຸ່ມບໍລິສັດ (ຖ້າມີ ຫຼື ບໍ່ມີກໍຕາມ), ນະໂຍບາຍກ່ຽວກັບຄ່າຕອບແທນ ແລະ ມູນຄ່າລວມທັງໝົດຂອງສະມາຊິກສະພາບໍລິຫານ ແລະ ຄະນະອຳນວຍການ ໃນບົດລາຍງານການເຄື່ອນໄຫວທຸລະກິດປະຈຳປີ;
- ຄວນເປີດເຜີຍຂໍ້ມູນລາຍລະອຽດກ່ຽວກັບຄ່າບໍລິການອື່ນທີ່ແມ່ນກວດສອບເອກະສານລາຍງານການເງິນຂອງບໍລິສັດກວດສອບ ແຕ່ລະປີ (ຖ້າມີ ຫຼື ບໍ່ມີກໍ່ຕາມ);
- ສະພາບໍລິຫານຄວນສ້າງ ແລະ ເປີດເຜີຍແຜນສືບທອດພະນັກງານສຳລັບຕຳແໜ່ງສະມາຊິກສະພາບໍລິຫານ, ຄະນະອຳນວຍການ ແລະ ພະນັກງານທີ່ສຳຄັນຂອງບໍລິສັດ;
- ສະພາບໍລິຫານ ຄວນຮັບຮອງແຜນການຈັດກອງປະຊຸມສະພາບໍລິຫານທີ່ ກວມເອົາວັນເວລາຈັດຕັ້ງກອງປະຊຸມສະພາບໍລິຫານ ແລະ ວາລະ ຈະປຶກສາຫາລື;
- ປະທານສະມາຊິກສະພາບໍລິຫານ ຄວນແມ່ນສະມາຊິກອິດສະຫຼະ. ກໍລະນີປະທານສະພາບໍລິຫານບໍ່ແມ່ນສະມາຊິກອິດສະຫຼະ ຄວນພິຈາລະນາຄັດເລືອກ ແລະ ແຕ່ງຕັ້ງຫົວໜ້າສະມາຊິກອິດສະຫຼະ.
- ປະທານຄະນະກຳມະການຕ່າງໆຂອງສະພາບໍລິຫານ ຄວນເປັນສະມາຊິກອິດສະລະ.
- ສະພາບໍລິຫານຄວນສ້າງ ແລະ ເປີດເຜີຍລະບຽບພາຍໃນກ່ຽວກັບການກຳນົດຄ່າຕອບແທນຂອງສະພາບໍລິຫານ, ຄະນະອຳນວຍການ ແລະ ພະນັກງານ ໃຫ້ມວນຊົນຊາບ ຜ່ານທາງເວັບໄຊຂອງບໍລິສັດ;
- ສະພາບໍລິຫານຕ້ອງຮັບຮອງລະບຽບພາຍໃນກ່ຽວກັບຄະນະກຳມະການຕ່າງໆຂອງສະພາບໍລິຫານ ພ້ອມທັງເຜີຍແຜ່ລະບຽບດັ່ງກ່າວໃຫ້ມວນຊົນຮັບຊາບຜ່ານເວັບໄຊຂອງບໍລິສັດ;
- ສະພາບໍລິຫານຄວນປະເມີນຜົນການເຄື່ອນໄຫວວຽກງານຂອງສະພາບໍລິຫານ, ສະມາຊິກສະພາບໍລິຫານ ແລະ ຄະນະກຳມະການຂອງສະພາບໍລິຫານປະຈຳປີ;
- ສະພາບໍລິຫານຄວນສ້າງ ແລະ ເຜີຍແຜ່ມາດຖານ, ເງື່ອນໄຂ ແລະ ຂັ້ນຕອນກ່ຽວກັບການປະເມີນຜົນການເຄື່ອນໄຫວວຽກງານຂອງ ປະທານສະພາບໍລິຫານ, ສະມາຊິກສະພາບໍລິຫານ ແລະ ຄະນະກຳມະການຂອງສະພາບໍລິຫານ ໃນບົດລາຍງານການເຄື່ອນໄຫວທຸລະກິດປະຈຳປີ.

ຜູ້ອຳນວຍການໃຫຍ່ ຕລຊລ

ບໍລິສັດ ຕະຫຼາດຫຼັກຊັບລາວ ຈຳກັດ Lao Securities Exchange Co.,Ltd

ສຸພັ ຖິ່ນໄຊພອນ